




ລັດອະນຸມັດພັດທະນາໂຄງການເຂື່ອນໄຟຟ້າເຊບັ້ງໄຟ 1




ລັດຖະບານໄດ້ອະນຸມັດໃຫ້ບໍລິສັດລາວສະໄໝສືບຕໍ່ພັດທະນາໂຄງການເຂື່ອນເຊບັ້ງໄຟ 1 ແລະ ສຳຫຼວດຜົນກະທົບດ້ານສິ່ງແວດລ້ອມ ແລະ ອອກແບບກໍ່ ສ້າງໃນໂຄງການພັດທະນາ (PDA) ເພື່ອໃຫ້ເກີດຜົນປະໂຫຍດໂດຍໄວ.

ໃນວັນທີ 14 ມິຖຸນາຜ່ານມາທີ່ກະຊວງແຜນການ ແລະ ການລົງທຶນໄດ້ມີພິທີເຊັນສັນຍາພັດທະນາໂຄງການ (PDA) ເຂື່ອນໄຟຟ້າເຊບັ້ງໄຟ 1 (ແກ້ງ ແກ້ວ) ແຂວງຄຳມ່ວນ ແລະແຂວງສະຫວັນນະເຂດ ລະຫວ່າງລັດຖະບານລາວ ແລະ ບໍລິສັດລາວສະໄໝກໍ່ສ້າງ, ຂົວທາງ ແລະ ບໍລິການຈຳກັດ ແລະ ບໍລິສັດ Nara clean energ co,ltd ໂດຍການໃຫ້ກຽດເຂົ້າຮ່ວມຂອງ ທ່ານ ສຸພັນ ແກ້ວມີໄຊ ລັດຖະມົນຕີກະຊວງແຜນການ ແລະການລົງທຶນ,ມີບັນດາລັດ ຖະມົນຕີ, ຮອງລັດຖະມົນຕີ, ເຈົ້າແຂວງໆຄຳມ່ວນ, ເຈົ້າແຂວງແຂວງສະຫວັນນະເຂດ, ມີຫົວໜ້າຫ້ອງການ, ຫົວໜ້າກົມ, ຮອງຫົວໜ້າຫ້ອງການ, ຮອງຫົວໜ້າກົມ, ຮອງພະແນກຈາກສູນກາງ ແລະທ້ອງຖິ່ນ, ພະນັກງານຂະແໜງການທີ່ກ່ຽວຂ້ອງ ແລະຕາງໜ້າຈາກບໍລິສັດເຂົ້າຮ່ວມ.

ທ່ານ ພູວົງ ກໍຣະສັກ ປະທານບໍລິສັດລາວສະໄໝກໍ່ສ້າງຂົວທາງ ແລະບໍລິການຈຳກັດກ່າວວ່າ: ເຂື່ອນໄຟຟ້າເຊບັ້ງໄຟ 1 (ແກ້ງແກ້ວ) ເປັນເຂື່ອນເນກປະ ສົງຊຶ່ງເປັນເຂື່ອນຂະໜາດກາງ 110 ເມກາວັດ ທັງຜະລິດໄຟຟ້າ ແລະເອົານ້ຳມາໃຊ້ຊົນລະກະເສດ, ລ້ຽງສັດ, ປູກຟັງພ້ອມນີ້ເຂື່ອນດັ່ງກ່າວຍັງສາມາດສ້າງ ເປັນເຂື່ອນແບບຝາຍນ້ຳລົ້ນ, ເຮັດປະ ຕູລະບາຍນ້ຳໄດ້ເລິກ ແລະກວ້າງຕາມ ລ້ວງນ້ຳໄດ້ປະມານ 9 ບານ, ພ້ອມທັງສາມາດເປີດກວ້າງເພື່ອຂະຫຍາຍລອງ ນ້ຳເຊໄດ້ຕື່ມອີກປະມານ 70 ແມັດ. ການສ້າງເຂື່ອນດັ່ງກ່າວ ຈະບໍ່ມີຜົນກະ ທົບຫຍັງຕໍ່ສິ່ງແວດລ້ອມ ໂດຍສະເພາະ ທີ່ພັກອາໃສ ແລະບ້ານເຮືອນປະຊາຊົນ ໃນຂົງເຂດດັ່ງກ່າວສະນັ້ນ ພາຍຫຼັງສ້າງ ເຂື່ອນໄຟຟ້າເຊບັ້ງໄຟ 1 (ແກ້ງແກ້ວ) ສຳເລັດປະຊາຊົນໃນເຂດດັ່ງກ່າວຈະ ໄດ້ອະນິສົງມະຫາສານເປັນຕົ້ນ: ມີໄຟຟ້າ ໃຊ້, ມີນ້ຳເຮັດການປະມົງ, ມີນ້ຳເຮັດຊົນ ລະກະເສດ ແລະຈັດສັນເຮັດເປັນແຫຼ່ງທ່ອງທ່ຽວແບບທຳມະຊາດ ແລະອື່ນໆ. ຊຶ່ງໂຄງການແມ່ນຈະລິເລີ່ມມາແຕ່ປີ 2013 ໂດຍທາງບໍລິສັດໄດ້ສຶກສາເກັບກຳຂໍ້ມູນທາງດ້ານນ້ຳ, ທາງດ້ານຊັ້ນດິນ ແລະສິ່ງແວດລ້ອມອື່ນໆຢ່າງເປັນລະບົບ.

ລົງນາມເຊັນສັນຍາຄັ້ງນີ້ໂດຍທ່ານ ສຸພັນ ແກ້ວມີໄຊ ລັດຖະມົນຕີກະຊວງແຜນການ ແລະການລົງທຶນ, ທ່ານ ທອງພັດ ອິນທະວົງ ຮອງລັດຖະມົນຕີກະຊວງພະລັງງານ ແລະ ບໍ່ແຮ່, ທ່ານ ພູຊະນະ ໄຊໂກສີ ຮອງຫົວໜ້າພະແນກແຜນການ ແລະການລົງທຶນແຂວງຄຳມ່ວນ, ທ່ານ ຄຳສອນ ສະຫວັນນະເລີດ ຮອງຫົວໜ້າພະແນກແຜນການ ແລະການລົງທຶນແຂວງສະຫວັນນະເຂດ, ທ່ານ ພູວົງ ກໍຣະສັກ ປະທານບໍລິສັດລາວສະໄໝກໍ່ສ້າງ, ຂົວທາງ ແລະ ບໍລິການຈຳ ກັດ, ທ່ານ ກິດສະດາ ມົນທຽນວິຊຽນສາຍກຳມະການ ບໍລິສັດ Nara clean energ co,ltd ແລະທ່ານ ປະວັດ ປຣະກິດລີ ກຳມະການບໍລິສັດ Naracle an energ co,ltd ພ້ອມດ້ວຍແຂກຖືກເຊີນເຂົ້າຮ່ວມເປັນສັກຂີພິຍານ.

*ຂຽນໂດຍ: ວົງມະນີ*

*ພາບ ແລະຂ່າວຈາກ: ໜັງສືພິມເສດຖະກິດ-ສັງຄົມ*

19/06/2019

ໂຄສະນາ